ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນມິຖຸນາ , ປີ 2026 ) ໜ້າ 32 – 41
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No. 3 (June, 2026) Page 32 – 41
ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

# ພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດດ້ວຍກິດຈະກຳການຮຽນຮູ້ແບບ Active Learning ສຳລັບນັກຮຽນປະຖົມ ຂັ້ນປ4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ

# Developing Grade 4 Students' English Speaking Skills through Active Learning Activities at Pakse Teacher Training College Demonstration Primary School

ຄຳພຸກ ແກ້ວພິລາ[1] ແລະ ສົມສະໄຫວ ປະເສີດໄຊ[2]
Khamphouk KAIPHILA[1] & Somsavay PHASUETHXAY[2]

## ບົດຄັດຫຍໍ້

ງານວິໄຈໃນຫ້ອງຮຽນສະບັບນີ້ມີຈຸດປະສົງ 1) ເພື່ອພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດດ້ວຍກິດຈະກຳການຮຽນຮູ້ແບບ Active Learning ສຳລັບນັກຮຽນປະຖົມ ຂັ້ນປ4 ໂຮງຮຽນປະຖົມສາທິດວິທະຍາໄລຄູປາກເຊ. ແລະ 2) ເພື່ອປຽບທຽບຜົນການຮຽນຮູ້ກ່ອນ ແລະ ຫຼັງ ຂອງນັກຮຽນປະຖົມດ້ວຍກິດຈະກຳການຮຽນຮູ້ແບບ Active learning ສຳລັບນັກຮຽນປະຖົມຊັ້ນປ 4 ໂຮງຮຽນປະຖົມສາທິດ. ກຸ່ມທົດລອງທີ່ໃຊ້ໃນການຄົ້ນຄ້ວາຄັ້ງນີ້ໄດ້ແກ່ ນັກຮຽນຊັ້ນປະຖົມສຶກສາ ຂັ້ນ ປ4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ. ເຊິ່ງມີຈຳນວນ 25 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາມີ 2 ຊະນິດຄື: 1) ແບບທົດສອບ ວັດຜົນສຳເລັດກ່ອນການຮຽນ ແລະ ຫຼັງການຮຽນວິຊາພາສາອັງກິດ 2) ແບບຟອມສັງເກດການຮຽນ-ສອນຂອງຄູໃນການນຳໃຊ້ວິທີການສອນແບບ Active learning ເຊິ່ງມີເນື້ອໃນ 5 ດ້ານ ເຊິ່ງເປັນແບບຟອມສັງເກດການຮຽນ-ສອນຂອງຄູຕາມມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ

**ຜົນການຄົ້ນຄວ້າພົບວ່າ:**

1. ຜົນການພັດທະນາການຮຽນຮູ້ຂອງນັກຮຽນ ໂດຍການນຳໃຊ້ກິດຈະກຳການຮຽນຮູ້ແບບເນັ້ນການປະຕິບັດຕົວຈິງ (Active Learning) ເຂົ້າໃນການຈັດການຮຽນ-ການສອນວິຊາພາສາອັງກິດ ກ່ຽວກັບທັກສະການເວົ້າ ສຳລັບນັກຮຽນຊັ້ນປະຖົມສຶກສາປີທີ 4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ ພົບວ່າ:

[1,2] ພາກວິຊາ ສ້າງຄູປະຖົມສຶກສາ, ວິທະຍາໄລຄູປາກເຊ/ສປປ ລາວ
Corresponding author: ຄຳພຸກ ແກ້ວພິລາ , Email: phouk1641984@gmail.com, Tel: +8562058192806

ຄະແນນຫຼັງການຮຽນ ( $\bar{X}$= 8.08, SD = 1.11) ແມ່ນສູງກວ່າຄະແນນກ່ອນການຮຽນ ( $\bar{X}$= 5.72, SD = 0.79) ເຊິ່ງມີຄວາມແຕກຕ່າງກັນທາງສະຖິຕິຢ່າງມີໄນສຳຄັນ (t(25) = 10.59, p < 0.05).

2. ຜົນການວິເຄາະການຈັດການຮຽນ-ການສອນແບບ Active Learning ໃນທັງ 5 ດ້ານ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ($\bar{X}$= = 3.50, S.D. = 0.55), ເມື່ອພິຈາລະນາເປັນດ້ານມີລາຍລະອຽດ ດັ່ງນີ້: 1) ດ້ານທີ 1 ເນື້ອໃນບົດຮຽນ: ມີຄ່າສະເລ່ຍ ( $\bar{X}$) ເທົ່າກັບ 3.66 ແລະ ຄ່າຜັນປ່ຽນມາດຕະຖານ (SD) ເທົ່າກັບ 0.68. 2) ດ້ານທີ 2 ຄູຜູ້ສອນ: ມີຄ່າສະເລ່ຍ ( $\bar{X}$) ເທົ່າກັບ 3.68 ແລະ ຄ່າຜັນປ່ຽນມາດຕະຖານ (SD) ເທົ່າກັບ 0.70. 3) ດ້ານທີ 3 ນັກຮຽນ: ມີຄ່າສະເລ່ຍ ( $\bar{X}$) ເທົ່າກັບ 3.45 ແລະ ຄ່າຜັນປ່ຽນມາດຕະຖານ (SD) ເທົ່າກັບ 0.63. 4) ດ້ານທີ 4 ກິດຈະກຳການຮຽນ-ການສອນ: ມີຄ່າສະເລ່ຍ ( $\bar{X}$) ເທົ່າກັບ 3.27 ແລະ ຄ່າຜັນປ່ຽນມາດຕະຖານ (SD) ເທົ່າກັບ 0.69. ແລະ 5) ດ້ານທີ 5 ການວັດ ແລະ ປະເມີນຜົນ: ມີຄ່າສະເລ່ຍ ( $\bar{X}$) ເທົ່າກັບ 3.61 ແລະ ຄ່າຜັນປ່ຽນມາດຕະຖານ (SD) ເທົ່າກັບ 0.65.

**ຄຳສຳຄັນ:** ການຮຽນຮູ້ແບບຫ້າວຫັນ, ທັກສະການເວົ້າພາສາອັງກິດ, ນັກຮຽນຊັ້ນປະຖົມສຶກສາ ປີທີ 4

## Abstract

The purposes of this classroom research were: 1) to develop the English vocabulary speaking skills of Grade 4 students using Active Learning activities at Pakse Teacher Training College Demonstration Primary School , and 2) to compare the students' learning achievement before and after implementing the Active Learning approach. The experimental group consisted of 25 Grade 4 students selected from the Demonstration Primary School. The research instruments comprised two types: 1) pre-test and post-test achievement tests for English speaking skills , and 2) a 5-point Likert scale teacher performance observation form covering 5 dimensions of Active Learning instruction. Data were analyzed using percentage, mean ($\bar{X}$), and standard deviation (S.D.). The research findings revealed that: 1) the students' learning development in English speaking skills through Active Learning activities showed significantly higher post-test scores ($\bar{X}$= 8.08, S.D. = 1.11) compared to their pre-test scores ($\bar{X}$ = 5.72, S.D. = 0.79), with a statistically significant difference at p < 0.05 (t(25) = 10.59). 2) The evaluation of the Active Learning instructional management across all 5 dimensions was overall at a high level ($\bar{X}$ = 3.50, S.D. = 0.55). Analytically, the teacher dimension obtained the highest mean score ($\bar{X}$ = 3.68, S.D. = 0.70) , followed by lesson content ($\bar{X}$ = 3.66, S.D. = 0.68) , measurement and evaluation ($\bar{X}$ = 3.61, S.D. = 0.65) , students ($\bar{X}$ = 3.45, S.D. = 0.62), and instructional activities ($\bar{X}$ = 3.27, S.D. = 0.69) respectively.

**Keywords:** Active Learning, English Speaking Skills, Grade 4 Students

## ບົດນຳ

ພາສາອັງກິດມີຄວາມສຳຄັນຕໍ່ການພັດທະນາ ແລະ ການສຶກສາຢ່າງຫຼວງຫຼາຍເນື່ອງຈາກວ່າເປັນພາສາສາກົນທີ່ໃຊ້ໃນການຕິດຕໍ່ສື່ສານລະຫວ່າງປະເທດຕ່າງໆໃນໂລກ, ການຮຽນຮູ້ພາສາອັງກິດຈະຊ່ວຍໃຫ້ເຂົ້າເຖິງແຫຼ່ງຂໍ້ມູນຄວາມຮູ້ ແລະ ໂອກາດທາງການສຶກສາ ແລະ ການເຮັດວຽກທີ່ຫຼາກຫຼາຍ, ສະນັ້ນພາສາອັງກິດຈຶ່ງມີຄວາມສຳຄັນ ແລະ ຄວາມຈຳເປັນທີ່ຈະຕ້ອງໄດ້ພັດທະນາຄຸນນະພາບການຮຽນການສອນພາສາອັງກິດເພື່ອໃຫ້ຄົນຮຸ່ນໃໝ່ມີຄວາມສາມາດໃນການໃຊ້ພາສາອັງກິດໃນລະດັບມາດຕາຖານໄດ້ ຕະຫຼອດຈົນສາມາດເລືອກເຟັ້ນ ແລະ ໃຊ້ປະໂຫຍດຈາກຂໍ້ມູນຂ່າວສານໄດ້ຢ່າງມີປະສິດທິພາບຈຶ່ງໄດ້ມີການພັດທະນາຫຼັກສູດທີ່ເນັ້ນໃຫ້ຜູ້ຮຽນມີຄວາມສາມາດທາງພາສາທີ່ສຳຄັນສອງດ້ານຄວບຄູ່ກັນໄປຄືຄວາມສາມາດໃນການໃຊ້ພາສາເພື່ອເຂົ້າສູ່ສັງຄົມ ແລະ ນະວັດຕະກຳ,

ຄວາມສາມາດໃນການໃຊ້ພາສາຢ່າງຖືກຕ້ອງຕາມຫຼັກໄວຍະກອນ ແລະ ເໝາະສົມກັບສະຖານະການທີ່ໃຊ້ (ມະຫາວິທະຍາໄລຊຽງໃໝ່, 2010)

ພັກ-ລັດຖະບານ ແລະ ປະຊາຊົນລາວເຫັນວ່າການສຶກສາແມ່ນເຄື່ອງມືທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດ ແລະ ພັດທະນາເສດຖະກິດສັງຄົມ ເພື່ອປະຕິບັດພາລະກິດດັ່ງກ່າວໃຫ້ມີປະສິດທິພາບສູງກ່ອນອື່ນໝົດການສຶກສາຕ້ອງມີການພັດທະນາ. ທິດທາງລວມຂອງພັກໃນການພັດທະນາການສຶກສາໃນຊຸມປີຕໍ່ໜ້າ ແລະ ຍາວນານແມ່ນເອົາຄຸນນະພາບເປັນຕົ້ນຕໍ ແນໃສ່ຍົກລະດັບການສຶກສາແຫ່ງຊາດຂຶ້ນເພື່ອໃຫ້ຫຍັບໜໍ່ກັບສາກົນເທື່ອລະກ້າວ ບົນພື້ນຖານເສີມສ້າງພາສາອັງກິດໃຫ້ທຽບເທົ່າກັບປະເທດອື່ນໆ (ກະຊວງສຶກສາທິການ ແລະ ກິລາ, 2003).

ເຊິ່ງວ່າວິຊາພາສາອັງກິດໄດ້ນຳເຂົ້າໃນຫຼັກສູດໃນທຸກຊັ້ນຮຽນເລີ້ມແຕ່ຂັ້ນພື້ນຖານອະນຸບານສຶກສາຈົນຮອດລະດັບມະຫາວິທະຍາໄລໂດຍນັກຮຽນສາມາດຖ່າຍທອດຄວາມຮູ້ທີ່ຕົນມີໃຫ້ຜູ້ອື່ນຮູ້ຄວາມຄິດຂອງຕົນວ່າເປັນແນວໃດ ຕອ້ງການສິ່ງໃດ. ດັ່ງນັ້ນທັກສະພື້ນຖານທີ່ສຳຄັນໃນການຮຽນຮູ້ວິຊາພາສາອັງກິດ ແລະ ເປັນທັກສະພື້ນຖານທີ່ກ່ຽວຂ້ອງສຳພັນກັນຄືທັກສະການອ່ານ ແລະ ທັກສະການຂຽນ. ທັງນີ້ຜູ້ວິໄຈພົບວ່າ ການພັດທະນາຄວາມສາມາດດ້ານການອ່ານຄຳສັບພາສາອັງກິດໃຫ້ຖືກຕ້ອງ ຂອງນັກຮຽນປະຖົມປ 4 ແມ່ນມີຄວາມສຳຄັນຫຼາຍທີ່ສຸດເພາະວ່າເດັກຈະໄດ້ຮຽນຮູ້ວິທີການອອກສຽງທີ່ຖືກຕ້ອງ ແລະ ເພື່ອຝຶກຝົນທັກສະການອອກສຽງໃນຂັ້ນເລີ້ມຕົ້ນເພື່ອເປັນພື້ນຖານໃນການອ່ານປະກອບຄຳສັບ ແລະ ປະໂຫຍກພາສາອັງກິດໃນລະດັບຊັ້ນ ປ4 ແລະ ປ5 ເຊິ່ງໃນນັ້ນຜູ້ວິໄຈໄດ້ນຳໃຊ້ເທັກໂນໂລຊີເຂົ້າໃນວິທີການສອນການອອກສຽງທີ່ຫຼາກຫຼາຍ ແລະ ປະຕິບັດກິດຈະກຳສຳຜັດ ທີ່ເຮັດໃຫ້ນັກຮຽນເກີດການຮຽນຮູ້ດ້ວຍຕົນເອງ, ມີຄວາມມ່ວນຊື່ນໃນເວລາຮຽນ ແລະ ສາມາດຈື່ຈຳວິທີການອອກສຽງພາສາອັງກິດຈາກຄູ, ໝູ່ເພື່ອນ ແລະ ມີຄ່ວມສາມັກຄີເຮັດວຽກຮ່ວມກັບຜູ້ອື່ນ ໂດຍມີຄວາມ ກ້າສະແດງອອກ ແລະ ເກີດທັກສະໂດຍອິງລວມທັງທັກສະທາງຄວາມຄິດ ຮ່າງກາຍ ສັງຄົມ ອາລົມ ຈະລິຍະທຳ ສິ່ງຜົນໃຫ້ຜູ້ຮຽນສາມາດເພິ່ງຕົນເອງໄດ້ ແລະ ມີຄວາມພາກພູມໃຈໃນຜົນງານທີ່ປະກົດເຊິ່ງຖືເປັນຜົນກຳໄລອັນສຳຄັນໃນການພັດທະນາຄຸນນະພາບການສຶກສາຂອງປະເທດເພື່ອສ້າງຄົນລາວໃຫ້ເປັນຄົນດີມີປັນຍາ ມີຄວາມສຸກມີສັກກະຍະພາບໃນການພັດທະນາພອ້ມທີ່ຈະຮ່ວມມືຢ່າງສ້າງສັນໃນເວທີໂລກ. (ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດ , 2019).

ການຮຽນຮູ້ຢ່າງຕັ້ງໜ້າຫ້າວຫັນ (Active Learning) ແມ່ນຂະບວນການຈັດການການຮຽນຮູ້ທີ່ຜູ້ຮຽນປະຕິບັດ ແລະ ໄດ້ຜົນໃຊ້ຂະບວນການຄິດກ່ຽວກັບສິ່ງທີ່ໄດ້ເຮັດ, ເຊິ່ງ Bonwell (1991) ຈັດຕັ້ງກິດຈະກຳການຮຽນຮູ້ພາຍໃຕ້ການສົມມຸດຕິຖານ.ສອງຈຸດພື້ນຖານຄື: 1) ການຮຽນຮູ້ແມ່ນຄວາມພະຍາຍາມທຳມະຊາດຂອງມະນຸດ ແລະ 2) ແຕ່ລະຄົນມີຄຳແນະນຳສຳລັບການຮຽນຮູ້ທີ່ແຕກຕ່າງກັນ Fedler ແລະ Brent (1996) ຍັງໄດ້ລະບຸວ່າ Active Learning ສາມາດໃຫ້ໂອກາດສຳລັບຜູ້ຮຽນຝຶກທັກສະການເວົ້າດ້ວຍຕົນເອງ ແລະ ຍັງສາມາດຈັດລະບຽບຄວາມຄິດຂອງນັກຮຽນໃນດ້ານການສ້າງຄວາມຮູ້ກ່ອນນັກຮຽນເວົ້າອີກຄັ້ງ ແລະ ນັກຮຽນຈະມີການໂຕ້ຕອບຫຼາຍກວ່າການເວົ້າໂດຍການແຍກ ຫຼືເວົ້າເພື່ອແຂ່ງຂັນກັນ, ເພາະສະນັ້ນທີມງານຄົ້ນຄ້ວາໄດ້ນຳໃຊ້ການຮຽນຮູ້ຢ່າງຫ້າວຫັນ (Active Leaning) ກັບກິດຈະກຳ ເກມກ່ຽວກັບຄຳສັບພາສາອັງກິດ ແລະ ເພງພາສາອັງກິດ ຫຼື ກິດຈະກຳການແຂ່ງຂັນກັນຖາມຕອບເພື່ອແກ້ໄຂບັນຫາການເວົ້າພາສາອັງກິດເພື່ອສົ່ງເສີມ ແລະ ພັດທະນາການເວົ້າພາສາອັງກິດດ້ວຍການເຮັດເອງໂດຍການຝຶກອົບຮົມດ້ວຍຕົນເອງແລະຮຽນຮູ້ດ້ວຍຕົນເອງ. ເພື່ອໃຫ້ມີຄວາມກ້າຫານທີ່ຈະສະແດງອອກ ແລະສົ່ງເສີມການເຮັດວຽກເປັນທີມ ແລະ ມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງແຕ່ລະຄົນ.

ເພື່ອໃຫ້ເໝາະສົມກັບການເປັນໄວໜຸ່ມໃນສະຕະວັດທີ 21 ບັນຫາທີ່ທີມວິໄຈພົບໃນການສອນພາສາອັງກິດແມ່ນນັກຮຽນບໍ່ໄດ້ ມີຄວາມກະຕືລືລົ້ນທີ່ຈະເວົ້າ, ບໍ່ມີຄວາມກ້າຫານສະແດງອອກ ແລະ ບໍ່ສາມາດນຳໃຊ້ເລື່ອງທີ່ຮຽນມາໃນການເວົ້າ ແລະ ການສື່ສານຢ່າງມີປະສິດທິພາບ ອັນນີ້ເຮັດໃຫ້ນັກຮຽນບໍ່ສາມາດໃຊ້ພາສາໃນການເວົ້າໄດ້ຕາມຄວາມເໝາະສົມກັບໂອກາດ ແລະ ສະຖານະການ, ລວມທັງສະພາບແວດລ້ອມອ້ອມຂ້າງທີ່ພາສາອັງກິດບໍ່ໄດ້ໃຊ້ໃນການສື່ສານ ຖ້າຫາກວ່າພາສາອັງກິດໄດ້ຖືກນຳໃຊ້ເປັນປົກກະຕິສຳລັບການສື່ສານ, ນັກສຶກສາຈະມີຄວາມກ້າຫານທີ່ຈະສະແດງອອກຕົນເອງ ແລະ ມີຄວາມໝັ້ນໃຈທີ່ຈະສາມາດເວົ້າພາສາອັງກິດໄດ້ຈາກການສຶກສາເອກະສານ ແລະພາຍຫຼັງໄດ້ກວດກາວັນນະຄະດີທີ່ກ່ຽວຂ້ອງແລ້ວ, ໄດ້ພົບເຫັນວ່າ, ການແກ້ໄຂບັນຫາດັ່ງກ່າວສາມາດເຮັດໄດ້ໂດຍການຈັດການເຮັດໃຫ້ກິດຈະກຳການສິດສອນເປັນຈິງຫຼາຍແມ່ນການນຳໃຊ້ບົດບາດຫຼືກິດຈະກຳການສອນນຳພາຈັດຕັ້ງການຮຽນຮູ້ເຂົ້າໄປໃນສະຖານະການທີ່ແຕກຕ່າງກັນຈຳລອງການເວົ້າ ແລະ ການສື່ສານໃນພາສາອັງກິດເຊິ່ງເປັນກິດຈະກຳໜຶ່ງໃນຂະບວນການຮຽນຮູ້ຮູບແບບການຮຽນຮູ້ແບບຫ້າວຫັນແມ່ນຖືກນຳໃຊ້ເພາະວ່າມັນເປັນກິດຈະກຳທີ່ມ່ວນຊື່ນທີ່ຝຶກທັກສະການເວົ້າແລະຊ່ວຍໃຫ້ນັກຮຽນພົວພັນກັບໝູ່ເພື່ອນຂອງພວກເຂົາຫ້ອງຮຽນແລະມີໂອກາດທີ່ຈະປະຕິບັດຄວາມຫລາກຫລາຍຂອງພຶດຕິກຳຫຼາຍໆສະຖານະການອະນຸຍາດໃຫ້ນັກຮຽນສະແດງຄວາມຮູ້ສຶກທີ່ເປັນເອກະລັກຂອງເຂົາເຈົ້າພວກເຮົາໃຫ້ໂອກາດແກ່ນັກຮຽນທີ່ຈະບໍ່ສະແດງຄວາມຄິດເຫັນຂອງເຂົາເຈົ້າແລະຖືກກະຕຸ້ນ. ນຳໄປສູ່ການຮຽນຮູ້ອັດຕະໂນມັດ ແລະ ບໍ່ໄດ້ກັງວົນກັບສະຖານະການຕົວຈິງທີ່ຈະເກີດຂຶ້ນ.ແລະຈາກການສຶກສາຄົ້ນຄ້ວາ, ພົບວ່າກິດຈະກຳການຫຼິ້ນບົດບາດຊ່ວຍໃຫ້ຜູ້ມີບົດບາດມີຄວາມຄິດສ້າງສັນ, ເປີດເຜີຍ, ມີຄວາມໝັ້ນໃຈໃນຕົນເອງ, ກ້າສະແດງອອກ, ແລະມີຄວາມກະຕືລືລົ້ນສາມາດແກ້ໄຂບັນຫາຕ່າງໆ ແລະປັບພຶດຕິກຳຂອງເຂົາເຈົ້າໃຫ້ເໝາະສົມກັບສະຖານະການທີ່ຄ້າຍຄືກັນກັບການເວົ້າພາສາອັງກິດໃນຊີວິດຈິງ ໃນຂະນະດຽວກັນກິດຈະກຳການຫຼິ້ນບົດບາດຊ່ວຍໃຫ້ນັກຮຽນຮັບຟັງຄວາມຄິດເຫັນຂອງເພື່ອນຮ່ວມງານຂອງເຂົາເຈົ້າແລະຍັງສ້າງບັນຍາກາດໃນການຮຽນ-ການສອນມ່ວນ ແລະ ເປັນມິດເຊັ່ນດຽວກັນ. ກິດຈະກຳສະແດງບົດບາດຊ່ວຍໃຫ້ຜູ້ມີບົດບາດຄວາມຄິດສ້າງສັນເປີດເຜີຍ, ຄວາມໝັ້ນໃຈຕົນເອງ, ການສະແດງຕົນເອງ, ແລະ ຄວາມກະຕືລືລົ້ນ. ສາມາດແກ້ໄຂບັນຫາຕ່າງໆ ແລະ ປັບພຶດຕິກຳຂອງເຂົາເຈົ້າໃຫ້ເໝາະສົມກັບສະຖານະການໃກ້ຄຽງຈາກບັນຫາດັ່ງກ່າວ ແລະ ການຄົ້ນຄວ້າ ທີມວິໄຈຈຶ່ງຢາກຈັດ Active Learning ເພື່ອຊຸກຍູ້ໃຫ້ໃຫ້ໂອກາດນັກຮຽນໄດ້ຝຶກຝົນຫຼໍ່ຫຼອມ ແລະ ກຽມໃຊ້ພາສາເພື່ອສື່ສານໃນຫຼາຍໆສະຖານະການ, ສ້າງຄວາມມ່ວນຊື່ນ.ການສຶກສາຊ່ວຍໃຫ້ນັກຮຽນໄດ້ຮຽນຮູ້ວິທີການປະພຶດຕົວໃນສັງຄົມ. ຝຶກການແກ້ໄຂບັນຫາ ແລະ ຊ່ວຍໃຫ້ນັກຮຽນເຂົ້າໃຈໝັ້ນໃຈໃນການຕັດສິນໃຈ ແລະເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນ. ເຊັ່ນດຽວກັນກັບສາມາດປະຕິບັດທີ່ເໝາະສົມຕໍ່ຜູ້ອື່ນ, ນຳໄປສູ່ການພັດທະນາການເວົ້າພາສາອັງກິດໄດ້ຢ່າງວ່ອງໄວ ແລະ ມີປະສິດທິພາບຫຼາຍຍິ່ງຂຶ້ນ.ໄຊຍົດ ເຮືອງສຸວັນ. (2010b). (Bonwell and Eison, 1991) ສະນັ້ນຈຶ່ງສົມຄວນພັດທະນາຄວມສາມາດດ້ານການເວົ້າຄຳສັບພາສາອັງກິດໂດຍນຳໃຊ້ວິທີການແບບ Active learning ສຳລັບນັກຮຽນປະຖົມຊັ້ນປ 4 ໂຮງຮຽນປະຖົມສາທິດວິທະຍາໄລຄູປາກເຊ. ໂຮງຮຽນປະຖົມສາທິດແມ່ນໂຮງຮຽນທີ່ນອນຢູ່ໃນເຄືອຄ່າຍຂອງ ວິທະຍາໄລຄູປາກເຊ ເຊິ່ງຂຶ້ນກັບກະຊວງສຶກສາທິການ ແລະ ກິລາ, ເພື່ອເປັນການຖອດຖອນບົດຮຽນ ແລະ ພັດທະນາການຮຽນການສອນໃຫ້ມີປະສິດທິພາບສູງຂຶ້ນເລື້ອຍໆ. ຈາກການສັງເກດການສອນຕົວຈິງໃນຫ້ອງຮຽນຊັ້ນປະຖົມ ປ4 ທີ່ຜ່ານມາການສອນພາສາອັງກິດສ່ວນຫຼາຍແມ່ນເອົາຄູເປັນໃຈກາງໃນການສອນ,ການສອນຍັງບໍ່ໄດ້ໃຫ້ນັກຮຽນລົງເລິກກ່ຽວກັບການເວົ້າຫຼາຍປານໃດ ພ້ອມດຽວກັນນັ້ນຜົນການຮຽນວິຊາພາສາອັງກິດຂອງນັກຮຽນຍັງຢູ່ໃນລະດັບຕ່ຳໃນທຸກໆເດືອນ ຖ້າທຽບໃສ່ວິຊາອື່ນທີ່ຖືກນຳມາສອນໃນຊັ້ນດຽວກັນ ແຕ່ໃນຂະນະດຽວກັນກໍ່ຍັງມີບາງຈຸດທີ່ຕ້ອງໄດ້ປັບປຸງ

ແລະ ແກ້ໄຂເຊັ່ນ: ການນຳເອົາຮູບແບບການສອນແບບ ທີ່ເນັ້ນການປະຕິບັດຕົວຈິງໃຫ້ຫຼາຍກໍຄືການສອນແບບ Active learning ເຂົ້າໃນການສອນການເວົ້າຄຳສັບພາສາອັງກິດເພື່ອໃຫ້ນັກຮຽນມີຄວາມສົນໃຈ ແລະ ທັງເປັນການສ້າງບັນຍາກາດໃນການຮຽນ ການສອນພາສາອັງກິດທີ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ສິ່ງດັ່ງກ່າວເປັນສາເຫດທີ່ເຮັດໃຫ້ນັກຮຽນ ຮຽນພາສາອັງກິດບໍ່ໄດ້ໂດຍສະເພາະແມ່ນຂາດທັກສະການເວົ້າ. ທົດສອບທັງພາກເວົ້າ ບໍ່ທັນມີເຕັກນິກການສອນໃໝ່ໆໃນການສອນພາສາອັງກິດທີ່ຈະຊ່ວຍໃຫ້ຄູມີກິດຈະກຳການສອນທີ່ຫຼາກຫຼາຍ,ແປກໃໝ່ ແລະ ໜ້າສົນໃຈ.

## ຈຸດປະສົງຂອງການຄົ້ນຄ້ວາ

- ເພື່ອພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດ ດ້ວຍກິດຈະກຳການຮຽນຮູ້ແບບ Active learning ສຳລັບນັກຮຽນປະຖົມຊັ້ນປ 4 ໂຮງຮຽນປະຖົມສາທິດ .

- ເພື່ອປຽບທຽບຜົນການຮຽນຮູ້ກ່ອນ ແລະ ຫຼັງ ຂອງນັກຮຽນປະຖົມດ້ວຍກິດຈະກຳການຮຽນຮູ້ແບບ Active learning ສຳລັບນັກຮຽນປະຖົມຊັ້ນປ 4 ໂຮງຮຽນປະຖົມສາທິດ.

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ ມີຈຸດປະສົງເພື່ອພັດທະນາຄວາມສາມາດດ້ານການເວົ້າພາສາອັງກິດຂອງນັກຮຽນປະຖົມ ປ4 ໂດຍວິທີການສອນແບບ Active learning ເຂົ້າໃນການພັດທະນາຄວາມສາມາດດ້ານການເວົ້າພາສາອັງກິດໃຫ້ມີຄວາມຄ່ອງແຄ້ວ ແລະ ຫ້າວຫັນ ສຳລັບນັກຮຽນປະຖົມ ປ 4 ໂຮງຮຽນປະຖົມສາທິດ, ດັ່ງນັ້ນ ຜູ້ຄົ້ນຄວ້າ ໄດ້ດຳເນີນການວິໄຈຕາມຂັ້ນຕອນດັ່ງນີ້:

1. ປະຊາກອນ ແລະ ກຸ່ມຕົວຢ່າງ
2. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ
3. ວິທີລວບລວມຂໍ້ມູນ
4. ວິທີການວິເຄາະຂໍ້ມູນ
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

### ປະຊາກອນ ແລະ ກຸ່ມຕົວຢ່າງ

#### ປະຊາກອນ

ປະຊາກອນທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກຮຽນປະຖົມ ປ4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ ສົກຮຽນ ປີ 2024-2025 ຈຳນວນ 32 ຄົນ.

#### ກຸ່ມຕົວຢ່າງ

ກຸ່ມທົດລອງທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນນັກຮຽນປະຖົມ ປ4 ຈຳນວນ 25 ຄົນ

### ເຄື່ອງມືໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນໃນຄັ້ງນີ້ແມ່ນ: ໄດ້ສ້າງເປັນແບບຟອມສັງເກດການສອນ ແລະ ແບບທົດສອບກ່ອນ ແລະ ຫຼັງ

- ແບບຟອມສັງເກດໃນກິດຈະກຳການຮຽນແບບ Active learning

- ແບບທົດສອບກ່ອນ ແລະ ຫຼັງການຮຽນ

ປະກອບມີ ມີ 2 ຕອນ ເຊິ່ງຈະໄດ້ນໍາສະເໜີດັ່ງຕໍ່ໄປ:

**ຕອນທີ1**: ແບບຟອມສັງເກດການຮຽນ-ສອນຂອງຄູໃນການນໍາໃຊ້ວິທີການສອນແບບ Active learning ເຊິ່ງມີເນື້ອໃນ 5 ດ້ານດັ່ງນີ້:

1. ດ້ານເນື້ອໃນບົດຮຽນ
2. ດ້ານຈັດກິດຈະກໍາການຮຽນ-ການສອນ
3. ດ້ານນັກຮຽນ
4. ດ້ານຄູສອນ
5. ດ້ານການວັດ ແລະ ປະເມີນຜົນ

ການວິໄຈຄັ້ງນີ້ເປັນແບບສໍາຫຼວດທີ່ເປັນຂໍ້ມູນທາງດ້ານຄຸນນະພາບໂດຍໃຊ້ແບບສັງເກດຊະນິດມາດຕາສ່ວນປະມານຄ່າ( rating scale) ຕາມວິທີການຂອງລິເກີຣ໌ທ ( Likert) ແຕ່ລະຂໍ້ມີຄໍາຕອບໃຫ້ເລືອກ 5 ລະດັບຄື: ລະດັບຄວາມຄິດເຫັນໜ້ອຍສຸດ, ລະດັບຄວາມຄິດເຫັນໜ້ອຍ, ລະດັບຄວາມຄິດເຫັນປານກາງ, ລະດັບຄວາມຄິດເຫັນຫຼາຍ, ລະດັບຄວາມຄິດເຫັນຫຼາຍສຸດ ໂດຍກໍານົດຄ່າຄະແນນດັ່ງນີ້:

| | |
|---|---|
| ລະດັບຄວາມຄິດເຫັນຫຼາຍສຸດ | 5 ຄະແນນ |
| ລະດັບຄວາມຄິດເຫັນຫຼາຍ | 4 ຄະແນນ |
| ລະດັບຄວາມຄິເຫັນປານກາງ | 3 ຄະແນນ |
| ລະດັບຄວາມຄິດເຫັນໜ້ອຍ | 2 ຄະແນນ |
| ລະດັບຄວາມຄິດເຫັນໜ້ອຍສຸດ | 1 ຄະແນນ |

**ຕອນທີ 2**: ແບບທົດສອບກ່ອນ ແລະ ຫຼັງການຮຽນ

**ຂັ້ນຕອນການສ້າງເຄື່ອງມື**

1) ສຶກສາໂຄງສ້າງ ແລະ ລາຍລະອຽດຂອງຫຼັກສູດການຈັດການຮຽນຮູ້ພາສາຕ່າງປະເທດ(ພາສາອັງກິດ) ລະດັບປະຖົມສຶກສາເພື່ອເຮັດຄວາມເຂົ້າໃຈກ່ຽວກັບຈຸດປະສົງ, ເນື້ອໃນ ແລະ ການປະເມີນຜົນ

2) ສ້າງແຜນການສອນຕາມຂອບເຂດເນື້ອໃນຫຼັກສູດຂອງລາຍວິຊາ ພາສາອັງກິດ ຊັ້ນ ປ4 ເພື່ອພັດທະນາການທັກສະເວົ້າພາສາອັງກິດຢ່າງຫ້າວຫັນ ປລະ ຄ່ອງແຄ້ວຂອງນັກຮຽນປະຖົມ ປ4 ຕາມໂຄງສ້າງຫຼັກສູດທີ່ກໍານົດໄວ້ ດ້ານເນື້ອໃນ ແລະ ຈຸດປະສົງເພື່ອນໍາມາສ້າງເປັນບົດສອນ

3) ສຶກສາຂັ້ນຕອນວິທີຂອງການສ້າງແຜນການສອນເຊິ່ງປະກອບດ້ວຍຈຸດປະສົງ, ເນື້ອໃນ, ກິດຈະກໍາການຮຽນການສອນ, ແລະປະກອນທີ່ໃຊ້ເປັນແຫຼ່ງການຮຽນຮູ້, ກໍານົດຂັ້ນຕ່າງໆໃນການຮຽນຮູ້ ແລະ ກໍານົດເວລາທີ່ໃຊ້ໃນແຕ່ລະກິດຈະກໍາໃຫ້ລະອຽດ

4) ນໍາສະເໜີບົດສອນ ຕໍ່ອາຈານທີ່ປຶກສາກວດສອບ ຈຸດປະສົງ, ເນື້ອໃນ, ກິດຈະກໍາການຮຽນຮູ້, ສື່ການສອນ ແລະ ການວັດປະເມີນຜົນ ຄວາມເໝາະສົມຂອງໄລຍະເວລາ ເພື່ອກວດຄວາມຖືກຕ້ອງແລ້ວແກ້ໄຂຕາມຄໍາແນະນໍາຂອງອາຈານຄູທີ່ປຶກສາ

5) ສ້າງບົດທົດສອບໂດຍການອີງໃສ່ວິທີການສອນແບບ Active learning ເພື່ອໃຫ້ສອດຄ່ອງກັບເນື້ອໃນຂອງບົດຮຽນພາສາອັງກິດຊັ້ນປ 4.

## ຜົນການວິເຄາະຂໍ້ມູນ ແລະ ການອະພິປາຍຜົນ

### ຜົນການວິເຄາະຂໍ້ມູນ

### ລໍາດັບຂັ້ນຕອນໃນການວິເຄາະຂໍ້ມູນ

**ຕອນທີ 1:** ຜົນການການນໍາໃຊ້ ກິດຈະກໍາການຮຽນຮູ້ແບບ Active learning ເຂົ້າໃນການພັດທະນາຄວາມສາມາດດ້ານການເວົ້າຄໍາສັບພາສາອັງກິດ 5 ດ້ານຄື:

| ລ/ດ | ເນື້ອໃນ | N | Mean | S.D | ຄວາມຄິດເຫັນ |
|---|---|---|---|---|---|
| 1 | ດ້ານເນື້ອໃນຂອງວິຊາພາສາອັງກິດ | 25 | 3.66 | 0.68 | ຫຼາຍ |
| 2 | ດ້ານຄູສອນ | 25 | 3.68 | 0.70 | ຫຼາຍ |
| 3 | ດ້ານນັກຮຽນ | 25 | 3.45 | 0.62 | ກາງ |
| 4 | ດ້ານກິດຈະກໍາການຮຽນການສອນ | 25 | 3.27 | 0.69 | ກາງ |
| 5 | ດ້ານການວັດ ແລະ ປະເມີນຜົນ | 25 | 3.61 | 0.65 | ຫຼາຍ |
| | | 25 | 3.50 | 0.55 | ຫຼາຍ |

ຈາກຕາຕະລາງ ສະແດງໃຫ້ເຫຫັນວ່າ ຜົນການວິເຄາະ 5 ດ້ານ ມີຄ່າສະເລ່ຍລວມ ( $\bar{X}$ ) 3,50 ຄ່າຜັນປ່ຽນມາດຕະຖານ 0.55. ເມື່ອພິຈາລະນາຕາມລໍາດັບຂອງແຕ່ລະດ້ານແຕ່ຫຼາຍຫາໜ້ອຍແລ້ວເຫັນວ່າ ດ້ານກິດຈະກໍາມີຄ່າສະເລ່ຍເທົ່າ ( $\bar{X}$ ) 3.27, ຄ່າຜັນປ່ຽນມາຕະຖານ (SD) 0.69. ຮອງລົງມາແມ່ນ ດ້ານນັກຮຽນ ມີຄ່າສະເລ່ຍແມ່ນ ( $\bar{X}$ ) 3.45 ຄ່າຜັນປ່ຽນມາດຕະຖານ (SD) 0.62 ຕາມລໍາດັບ.

**ຕອນທີ 2:** ການປຽບທຽບຜົນການຮຽນຮູ້ກ່ອນ ແລະ ຫຼັງການຮຽນ (T-TEST)

| ຄະແນນທົດສອບ | ຈໍານວນນັກຮຽນ | $\bar{x}$ | SD | t-test | sig |
|---|---|---|---|---|---|
| ຫຼັງຮຽນ | 25 | 8.08 | 1.11 | 10.59 | 0.00 |
| ກ່ອນຮຽນ | 25 | 5.72 | 0.79 | | |
| ລວມ | 25 | 2.36 | 1.11 | | |

ຜົນການຮຽນຮູ້ຂອງນັກຮຽນກ່ອນ ແລະ ຫຼັງການຮຽນໂດຍນໍາໃຊ້ຮູບແບບການສອນ Active learning ເຂົ້າໃນການຈັດການຮຽນການສອນກ່ຽວກັບການພັດທະນາຄວາມສາມາດດ້ານເວົ້າພາສາອັງກິດ ສໍາລັບນັກຮຽນຂັ້ນ ປ 4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ ຄະແນນຫຼັງການຮຽນ ($\bar{x}$ = 8.08, SD = 1.11) ສູງກວ່າກ່ອນການຮຽນ ($\bar{x}$ = 5.72, SD = 0.79) ດ້ວຍລໍາດັບຄວາມສໍາຄັນທາງສະຖິຕິ ($t(25) = 10.59$, $p < 0.05$ )

**ອະພິປາຍຜົນ**

ຈາກຜົນການວິໄຈ ກ່ຽວກັບພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດດ້ວຍກິດຈະກຳການຮຽນຮູ້ແບບ Active Learning ສຳລັບນັກຮຽນປະຖົມ ຂັ້ນປ4 ໂຮງຮຽນປະຖົມສາທິດ. ເຊິ່ງໄດ້ເຮັດການທົດສອບຕາມຫຼັກການ ແລະ ໄດ້ປະເດັນສຳຄັນຈາກຜົນການວິໄຈທີ່ນຳມາອະພິປາຍຜົນດັ່ງນີ້:

ພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດດ້ວຍກິດຈະກຳການຮຽນຮູ້ແບບ Active Learning ສຳລັບນັກຮຽນປະຖົມ ຂັ້ນປ4 ໂຮງຮຽນປະຖົມສາທິດ. ເຫັນວ່າຜົນການຮຽນຫຼັງການສອນແມ່ນຢູ່ໃນລະດັບດີຂຶ້ນ ເຊິ່ງການສອນແບບນີ້ໄດ້ຝຶກໃຫ້ນັກຮຽນອ່ອນມີການພັດທະນາຄວາມຮູ້, ຄວາມສາມາດ ນອກນັ້ນ, ຍັງໄດ້ຝຶກທັກສະເຮັດເປັນຄູ່, ເປັນກຸ່ມເພື່ອເຮັດໃຫ້ນັກຮຽນມີຄວາມສາມັກຄີ ແບບຝຶກທັກສະໃນກິດຈະກຳການອ່ານຄວນກ່ຽວຂ້ອງກັບເລື່ອງທີ່ຮຽນມາ ແລະ ມີຄວາມໝາຍຕໍ່ຜູ້ຮຽນ ສາມາດນຳໄປໃຊ້ໃນຊີວິດປະຈຳວັນ, ເປີດໂອກາດໃຫ້ຜູ້ຮຽນໄດ້ສຶກສາດ້ວຍຕົນເອງເຊິ່ງສອດຄ່ອງກັບທິດສະດີຂອງ ອາພອນ ປະພັນສີລີ ( 2556:367). ສອດຄ່ອງກັບງານວິໄຈຂອງ ລະອອງດາວ ແກ້ວວົງກິດ ແລະ ຄຳແຫວນ ສິດທິລາດ ( 2021:159 ) ທີ່ໄດ້ເຮັດການວິໄຈກ່ຽວກັບການພັດທະນາທັກສະການເວົ້າພາສາອັງກິດໂດຍນຳໃຊ້ສື່ປະເພດຮູບພາບເຂົ້າໃນການຮຽນພາສາອັງກິດຂອງນັກຮຽນມັດທະຍົມຊັ້ນ ມ2 ໂຮງຮຽນສາທິດ , ເຫັນວ່າຜົນການຮຽນ ຫຼັງການສອນແມ່ນ:" ດີ " ໂດຍການນຳໃຊ້ສື່ຊ່ວຍໃຫ້ການຮຽນມີການພັດທະນາທັກສະການເວົ້າໄດ້ດີຂຶ້ນເນື່ອງຈາກພວກເຂົາໄດ້ເບິ່ງຮູບ ແລະ ຊ່ວຍໃຫ້ຄິດຄຳສັບອອກໄດ້ ແລະ ນຳໃຊ້ໃນການເວົ້າປະໂຫຍກຕ່າງໆ. ຜ່ານການຮຽນການສອນດ້ວຍກິດຈະກຳທີ່ເນັ້ນໃສ່ການຝຶກແອບການເວົ້າພາສາອັງກິດໂດຍຄູນຳໃຊ້ສື່ ແລະ ປະສົມປະສານເຕັກນິກເຂົ້າໃນການສອນແຕ່ລະຂັ້ນຕອນຂອງການສອນເປັນປັດໄຈຫຼັກຊ່ວຍໃຫ້ນັກຮຽນເຂົ້າໃຈໃນສິ່ງທີ່ຄູສອນເຊິ່ງເຮັດໃຫ້ຄູສາມາດດຳເນີນກິດຈະກຳຢ່າງມີປະສິດທິພາບຫ້ອງຮຽນມີບັນຍາກາດ, ດຶງດູດຄວາມສົນໃຈບອກກັບກິດຈະກຳທີ່ຄູສ້າງຂຶ້ນ. ແລະ ສອດຄ່ອງກັບ ພົງສະຫວັດ ພົງສຸວັນ ພ້ອມຄະນະ ( 2022-2023: 84) ໄດ້ລະບຸວ່າ: ການພັດທະນາຊຸດກິດຈະກຳ Active Learning ໂດຍໃຊ້ Sano Model ໃນວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ5 ໂຮງຮຽນສາທິດ ໄດ້ລະບຸວ່າ: ຜົນການຮຽນ ຫຼັງການສອນແມ່ນຢູ່ໃນລະດັບ:" ດີ " ແບບຝຶກໄດ້ມີການພັດທະນາຄວາມຮູ້ ແລະ ທັກສະ ການຮຽນ ສາມາດເຮັດເປັນຄູ່ ແລະ ນຳໄປໃຊ້ໄດ້ໃນຊີວິດປະຈຳວັນ ເປີດໂອກາດໃຫ້ຜູ້ຮຽນເລືອກຝຶກ ແລະ ສຶກສາດ້ວຍຕົວເອງຫຼາຍຂຶ້ນ.

## ສະຫຼຸບຜົນການວິໄຈ

ຜ່ານການສຶກສາຄົ້ນຄວ້າວິໄຈຈາກການສັງເກດການຮຽນ-ການສອນ ຂອງການພັດທະນາຄວາມສາມາດດ້ານການເວົ້າຄຳສັບພາສາອັງກິດດ້ວຍກິດຈະກຳການຮຽນຮູ້ແບບ Active Learning ສຳລັບນັກຮຽນປະຖົມ ຂັ້ນປ4 ໂຮງຮຽນປະຖົມສາທິດ ວິທະຍາໄລຄູປາກເຊ. ໂດຍລວມທັງ 5 ດ້ານ ມີຜົນວິໄຈດັ່ງນີ້: 1) ດ້ານເນື້ອໃນບົດຮຽນ: ມີຄ່າສະເລ່ຍ ( $\bar{X}$) 3,66 ແລະ ຄ່າຜັນປ່ຽນມາດຕະຖານແມ່ນ (SD) 0,68 ຢູ່ໃນລະດັບຫຼາຍ, 2). ດ້ານຄູສອນສອນ : ມີຄ່າສະເລ່ຍ ( $\bar{X}$) 3, 68 ແລະ ຄ່າຜັນປຽນມາດຕະຖານ (SD) 0,70 ແມ່ນຢູ່ໃນລະດັບ ຫຼາຍ. 3) ດ້ານນັກຮຽນ ແມ່ນມີຄ່າສະເລ່ຍ ( $\bar{X}$) 3,65 ແລະ ຄ່າຜັນປ່ຽນມາດຕະຖານແມ່ນ (SD) 0,63 ແມ່ນຢູ່ໃນລະດັບຫຼາຍ. 4) ດ້ານກິດຈະກຳການຮຽນ-ການສອນ: ມີຄ່າສະເລ່ຍ 3,27 ແລະ ຄ່າຜັນປ່ຽນມາດຕະຖານແມ່ນ (SD) 0,69 ຢູ່ໃນລະດັບກາງ. 5) ດ້ານການວັດ ແລະ ປະເມີນຜົນ: ມີຄ່າສະເລ່ຍແມ່ນ ( $\bar{X}$) 3,61 ແລະ ຄ່າຜັນປ່ຽນມາດຕະຖານແມານ 0,65 ແມ່ນຢູ່ໃນລະດັບຫຼາຍ.

ຜົນຄະແນນຫຼັງການຮຽນ ( $X$ = 8.08, SD = 1.11) ສູງກວ່າກ່ອນການຮຽນ ( $X$ = 5.72, SD = 0.79) ດ້ວຍລຳດັບຄວາມສຳຄັນທາງສະຖິຕິ ($t(25) = 10.59$, $p < 0.05$)

ສະຫຼຸບໄດ້ວ່າ: ການສອນໃຊ້ຮູບແບບ Active Learning ເຂົ້າໃນການພັດທະນາຄວາມສາມາດດ້ານການເວົ້າພາສາອັງກິດຂອງນັກຮຽນຂັ້ນ ປ4 ເຊິ່ງສະແດງໃຫ້ເຫັນວ່ານັກຮຽນໄດ້ຮັບການພັດທະນາທັກສະ ແລະ ຄວາມສາມາດດ້ານການເວົ້າພາສາອັງກິດດີຂຶ້ນກວ່າເກົ່າຫຼາຍເຊິ່ງເຫັນໄດ້ວ່ານັກຮຽນມີຄວາມກ້າວໜ້າໃນການຮຽນເພີ່ມຂຶ້ນດ້ວຍວິທີການສອນໃນຮູບແບບ Active Learning ເຊິ່ງສອດຄ່ອງກັບງານວິໄຈສຶກສາການພັດທະນາຊຸດກິດຈະກໍາການຮຽນຮູ້ແບບ Active Learning ໂດຍໃຊ້ຮູບແບບ SANO Model ຂອງ (ພົງສະຫວັດ ພົງສຸວັນ ພ້ອມຄະນະ, 2022-2023).

## ຂໍ້ສະເໜີແນະຈາກການຄົ້ນຄວ້າວິໄຈ

### ຂໍ້ສະເໜີແນະຜົນຂອງການວິໄຈ

1. ການຈັດກິດຈະກໍາການການສອນໃນຮູບແບບ Active Learning ຄວນເນັ້ນໃຫ້ນັກຮຽນທຸກຄົນມີສ່ວນຮ່ວມໃນກິດຈະກໍາ ເປັນກຸ່ມ ມີຫົວໜ້າກຸ່ມ ແລະ ຮອງເພື່ອເຮັດໜ້າທີ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ.
2. ດ້ານຜູ້ສອນຄວນມີການຈົດບັນທຶກບັນຫາທີ່ພົບເຫັນໃນແຕ່ລະຄັ້ງເພື່ອຫາຂໍ້ບົກຜ່ອງ ແລະ ນໍາໄປປັບປຸງໃນການສອນຕໍ່ໄປ.
3. ການຈັດກິດຈະກໍາການຮຽນການສອນ ຄູຜູ້ສອນຄວນອອກແບບກິດຈະກໍາການສອນໃຫ້ເໝາະສົມກັບຜູ້ຮຽນໃນແຕ່ລະລະດັບ ເພື່ອໃຫ້ນັກຮຽນສາມາດຮຽນຮ່ວມກັນຢ່າງມີຄວາມສຸກ

### ຂໍ້ສະເໜີແນະໃນການເຮັດການວິໄຈຄັ້ງຕໍ່ໄປ.

1. ຄວນສຶກສາການເຮັດການວິໄຈທີ່ສົ່ງຜົນຕໍ່ການຮຽນການສອນໃນຫຼາຍຮູບແບບ
2. ຄວນມີການປຽບຮູບແບບ ແລະ ວິທີການສອນລະຫວ່າງໂຮງຮຽນດ້ວຍກັນ
3. ຄວນປຽບທຽບສະພາບບັນຫາຂອງນັກຮຽນທີ່ມີຕໍ່ວິຊາພາສາອັງກິດ ແລະ ວິຊາອື່ນໆ.

## ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ . ( 2025). *ແຜນພັດທະນາການສຶກສາ.* Ministry of Education and Sports. (ເອກະສານອັດສໍາເນົາ).

ກະຊວງສຶກສາ ແລະ ກິລາ. (2019). *ຫຼັກສູດພາສາອັງກິດຊັ້ນປະຖົມ ປ4.* ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ. ນະຄອນຫຼວງວຽງຈັນ. (ເອກະສານອັດສໍາເນົາ).

ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດ . (2019). *ປື້ມຄູ່ມືພາສາອັງກິດຊັ້ນປະຖົມສຶກສາ.* ນະຄອນຫຼວງວຽງຈັນ. (ເອກະສານອັດສໍາເນົາ).

ກະຊວງສຶກສາທິການ ແລະ ກິລາ. (2003). *ທິດທາງລວມຂອງພັກໃນການພັດທະນາການສຶກສາ.* ນະຄອນຫຼວງວຽງຈັນ. (ເອກະສານອັດສໍາເນົາ).

ກະຊວງສຶກສາທິການ ແລະ ກິລາ . (1998:30-38). *ຫຼັກການສອນທີ່ເອົາຄູເປັນໃຈກາງ.* ຫຼັກການສອນມັດທະຍົມຕົ້ນ 1. ຕີພິມປີ 2009. ນະຄອນຫຼວງວຽງຈັນ. (ເອກະສານອັດສໍາເນົາ).

ຄະນະໂຄສະນາອົບຮົມ. (2015). *ຫຼັກສູດສູນກາງພັກ.* ນະຄອນຫຼວງວຽງຈັນ. (ເອກະສານອັດສໍາເນົາ).

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2018-150). *ອົງປະກອບການນຳໃຊ້ພາສາອັງກິດເພື່ອການສື່ສານ ແລະ ການຮຽນຮູ້.* ກະຊວງສຶກສາທິການ ແລະ ກິລາ. (ເອກະສານອັດສຳເນົາ).

ສີຖານ ສຸກຂະວົງ 2000, ອ້າງໃນສຸກສົມພອນ ອະໂນໄທ. (n.d.). *ສະພາບ ແລະ ບັນຫາການຮຽນການສອນວິຊາຄະນິດສາດໃນໂຮງຮຽນຊັ້ນປະຖົມສຶກສາປີທີ 5.* ສັງກັດພະແນກກຳແພງນະຄອນຫຼວງວຽງຈັນ ສປປ ລາວ.

ສົມບັດ ທ້າຍເຮືອຄຳ. (2010:123). *ລະບຽບວິທີການວິໄຈ.* ມະຫາວິທະຍາໄລມະຫາສາລະຄາມ.

ໄຊຍົດ ເຮືອງສຸວັນ. (2010a.). *"Active Learning".* ເດືອນພະຈິກ ເຂົ້າເຖິງໄດ້ຈາກ http://qa. bu. ac. ch.

ໄຕຣຣົງ ເຈນາການ. (2549: 20-21). *ການປະເມີນຮູບແບບການສອນ.* (ບໍ່ປະກົດສະຖານທີ່ພິມ).

ນັດຊະນັນ ແກ້ວໄຊຈະເລີນກິດ. (2007b). *ຄວາມເປັນຜູ້ນຳດ້ານການສຶກສາ ແລະ ນະວັດຕະກຳ ບົດບາດຂອງຄູ Active Learning.* (ບໍ່ປະກົດສະຖານທີ່ພິມ).

ນັນທະລີ ພອນທະດາວິດ. (2017). "ການພັດທະນາການຈັດການຮຽນຮູ້ຢ່າງຫ້າວຫັນໃນວິຊາການຈັດການສຶກສາ" . *UTK RESEARCH JOURNAL.*, 11, 1:85-94.

ປະສາດ ເມືອງສະເຫຼີມ. (2013:224-225). *ວິໄຈການຮຽນ - ການສອນ.* ກຸງເທບມະຫານະຄອນ: ສຳນັກພິມມະຫາວິທະຍາໄລຈຸລາລົງກອນ.

ປຶ້ມຄູ່ມືພາສາອັງກິດຊັ້ນ ປ4. (2021). *teacher guide"English for Primary School book 4".* Ministry of Education and Sports. Research Institute for Educational Sciences.

ປຶ້ມແບບຮຽນພາສາອັງກິດຊັ້ນ ປ4. (2021). *"English for Primary School Textbook 4".* Ministry of education and Sports. Research Institute for Educational Sciences.

ພົງສະຫວັດ ພົງສຸວັນ ພ້ອມຄະນະ. (2022-2023). *ສຶກສາການພັດທະນາຊຸດກິດຈະກຳການຮຽນຮູ້ແບບ Active Learning ໂດຍໃຊ້ຮູບແບບ SANO Model ໃນວິຊາປະຫວັດສາດ ຊັ້ນມັດທະຍົມສຶກສາປີທີ 5.* ໂຮງຮຽນມັດທະຍົມສາທິດ.

ມະຫາວິທະຍາໄລຊຽງໃໝ່. (2010). ຄວາມສຳຄັນຂອງພາສາອັງກິດຕໍ່ການພັດທະນາ: *ວາລະສານການສຶກສາ, 1.*

ລະອອງດາວ ແກ້ວວົງກິດ, ແລະ ຄຳແຫວນ ສິດທິລາດ. (2013). ການພັດທະນາທັກສະການເວົ້າພາສາອັງກິດ ໂດຍນຳໃຊ້ສື່ປະເພດຮູບພາບເຂົ້າໃນການຮຽນພາສາອັງກິດຂອງນັກຮຽນມັດທະຍົມຊັ້ນ ມ2 ໂຮງຮຽນສາທິດ. *ວາລະສານວິທະຍາສາດການສຶກສາ,* 213-220.

ລັດສະໝີ ສີນົງ ອຸດົມກຣິດສີ ແລະ ກັນນິກາ ກິນນະພາກຽດ . (2018). *"ການຈັດການການຮຽນຮູ້ແບບຫ້າວຫັນໃນຍຸກ 4.0".* Journal of Educational Administration, Silpakorn University.

ວິໄຊ ເສວີກຽມ. (2016). *ການສອນການຮຽນຮູ້ແບບເຄື່ອນໄຫວ.* ຄະນະສຶກສາສາດ, ຈຸລາລົງກອນ ເຂົ້າເຖິງຂໍ້ມູນຈາກ http://fs.libarts.psu.ac.th/webcontent/KM/01%20KMActive%20Learning.pdf.

ຫ້ອງການວິຊາການ ແລະ ມາດຕະຖານການສຶກສາ. (2008). *ຫຼັກສູດຫຼັກປີ 2008.* (ບໍ່ປະກົດສະຖານທີ່ພິມ).

Bonwell, C. C., & Eison, J. A. (1991). *Active Learning: Creating excitement in the classroom* (ASHE-ERIC Higher Education Report No. 1). Association for the Study of Higher Education